# ບົດສັງລວມໂຄງການຫຍໍ້
## ການສະເໜີຂໍໂອນຮຸ້ນ ໃນໂຄງການຂຸດຄົ້ນ ແລະ ປຸງແຕ່ງ ເກືອກາລີ (ໂປຕາສ) ຢູ່ເຂດບ້ານທ່າງ່ອນ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ຂອງບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈຳກັດ ຊຶ່ງລາຍລະອຽດມີ

*ທີ່ສະເໜີຕໍ່ : ກອງປະຊຸມເຈົ້າຄອງ-ຮອງເຈົ້າຄອງ ຮ່ວມກັບພະແນກການ, ອົງການລັດທຽບເທົ່າພະແນກ ຂັ້ນນະຄອນຫຼວງວຽງຈັນ ແລະ ເມືອງທີ່ກ່ຽວຂ້ອງ ຄັ້ງທີ 42 ສະໄໝ VII, ຄັ້ງວັນທີ 25 ພະຈິກ 2024*

*ຮຽນ : - ທ່ານ ເຈົ້າຄອງ, ນະຄອນຫຼວງວຽງຈັນ, ທີ່ເຄົາລົບ ແລະ ນັບຖືຢ່າງສູງ;*
*- ທ່ານ ຮອງເຈົ້າຄອງ, ນະຄອນຫຼວງວຽງຈັນ, ທີ່ເຄົາລົບ ແລະ ນັບຖືຢ່າງສູງ;*
*- ບັນດາທ່ານ ເຈົ້າເມືອງ, ຫົວໜ້າພະແນກ, ຮອງພະແນກ ທີ່ນັບຖືຢ່າງສູງ;*

ພະແນກແຜນການ ແລະ ການລົງທຶນ, ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນລາຍງານ ກ່ຽວກັບການສະເໜີຂໍໂອນຮຸ້ນ ໃນໂຄງການຂຸດຄົ້ນ ແລະ ປຸງແຕ່ງ ເກືອກາລີ (ໂປຕາສ) ຢູ່ເຂດບ້ານທ່າງ່ອນ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ຂອງບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈຳກັດ ຊຶ່ງລາຍລະອຽດມີ ດັ່ງນີ້:

### 1) ຄວາມເປັນມາຂອງໂຄງການ:

ບໍລິສັດ ຊີໂນຮາຍໂດຼ ມາຍນິ້ງ(ລາວ) ຈຳກັດ ໄດ້ເຊັນສັນຍາກັບລັດຖະບານ ແຫ່ງ ສປປ ລາວ ຄັ້ງວັນທີ 28 ທັນວາ 2009 ຢູ່ເຂດບ້ານທ່າງ່ອນ ເມືອງ ໄຊທານີ ນະຄອນຫຼວງວຽງຈັນ ໃນເນື້ອທີ່ 39,38 ກິໂລຕາແມັດ (ແບ່ງເປັນ 2 ເຂດຄື: ເຂດທີ 1: ເນື້ອທີ່ 11,96 ກິໂລຕາແມັດ ເຂດເມືອງ ໄຊທານີ ນະຄອນຫຼວງວຽງຈັນ ແລະ ເຂດທີ 2:ເນື້ອທີ່ 27,42 ກິໂລຕາແມັດ ຢູ່ເຂດ ເມືອງ ທຸລະຄົມ ແຂວງ ວຽງຈັນ), ອາຍຸສັນຍາ 30 ປີ (ສັນຍາໝົດອາຍຸວັນທີ 28 ທັນວາ 2039) ດ້ວຍຮູບການລົງທຶນຕ່າງປະເທດ 100% ສປ ຈີນ ໂດຍແມ່ນ ບໍລິສັດ Sinohydro Corporation Limited ( ສປ ຈີນ), ເປັນຜູ້ລົງທຶນ ແລະ ຖືຮຸ້ນ 100% ແລະ ໄດ້ສ້າງຕັ້ງບໍລິສັດໂຄງການຂຶ້ນຊື່ວ່າ: ບໍລິສັດ ຊີໂນໄຮໂດຣ ມາຍນິ່ງ (ລາວ) ຈຳກັດ ມີມູນຄ່າການລົງທຶນທັງໝົດ: 94,690,000 ໂດລາສະຫະລັດ ແລະ ທຶນຈົດທະບຽນ: 28,407,000 ໂດລາສະຫະລັດ, ເຊິ່ງຜ່ານມາລັດຖະບານ ໄດ້ດັດແກ້ສັນຍາໃຫ້ໂຄງການດັ່ງກ່າວ 01 ຄັ້ງ, ໂດຍການປ່ຽນແປງຜູ້ຖືຮຸ້ນ ຈາກ ບໍລິສັດ Sinohydro Corporation Limited ( ສປ ຈີນ) ຖືຮຸ້ນ 100% ມາເປັນ ບໍລິສັດ Sinohydro Corporation Limited ( ສປ ຈີນ) ຖືຮຸ້ນ: 70%, ບໍລິສັດ Zhejiang Xinhu Group Co., Ltd, ຖືຮຸ້ນ: 30%.

ມາຮອດປັດຈຸບັນ, ບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈຳກັດ ໄດ້ສະເໜີລັດຖະບານ ເພື່ອຂໍໂອນຮຸ້ນທັງໝົດຂອງໂຄງການ ຈາກ ບໍລິສັດ Sinohydro Corporation Limited, ຖືຮຸ້ນ: 70% ແລະ ບໍລິສັດ Zhejiang Xinhu Group Co., Ltd, ຖືຮຸ້ນ: 30% **ມາເປັນ** ບໍລິສັດ Sunward Hongkong Co., Limited ຖືຮຸ້ນ 100% .

### 2) ການເຄື່ອນໄຫວໄລຍະຜ່ານມາຂອງ ໂຄງການ:

ພາຍຫຼັງໄດ້ຮັບອະນຸຍາດ ບໍລິສັດ ໄດ້ດຳເນີນກິດຈະການຕາມສັນຍາ ແຕ່ປີ 2010 ແລະ ສຳເລັດການກໍ່ສ້າງໂຮງງານປຸງແຕ່ງແຮ່ ແລ້ວເລີ່ມດຳເນີນການຜະລິດຢ່າງເປັນທາງການໃນເດືອນກໍລະກົດ ປີ 2014, ເຊິ່ງຜົນຂອງການສຳຫຼວດເຫັນວ່າ ມີປະລິມານຊັບພະຍາ ກອນທັງໝົດ 1.164 ລ້ານໂຕນ, ດ້ວຍຄຸນນະພາບ ແຮ່ເກືອກາລີ ສະເລ່ຍ 14,23 %, ເຊິ່ງການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຮັບຮອງຄັ້ງວັນທີ 31 ພຶດສະພາ 2010, ໂດຍການນຳເອົາປະລິມານສະສົມຈຳນວນ 63 ລ້ານໂຕນ ເຂົ້າສູ່ການຂຸດຄົ້ນ, ຄຸນນະພາບ ສະເລ່ຍ 18,88%, ແຜນການຂຸດຄົ້ນ 1,94 ລ້ານໂຕນຕໍ່ປີ, ແຜນການປຸງແຕ່ງ ເກືອກາລີ 95% ໃຫ້ໄດ້ຈຳນວນ 120,000 ໂຕນຕໍ່ປີ. NaCl ຈຳນວນ 40.000 ໂຕນຕໍ່ປີ ແລະ Mg Cl ຈຳນວນ 88.500 ໂຕນຕໍ່ປີ. ມີພະນັກງານ ປະຈຳຢູ່ພາກສະໜາມ ທັງໝົດ 25 ຄົນ, ໃນນັ້ນ ຄົນລາວ 22 ຄົນ ແລະ ຕ່າງປະເທດ (ຄົນຈີນ) 3 ຄົນ.

ມາຮອດໄລຍະເດືອນກຸມພາ (2) 2015 ເປັນຕົ້ນມາ ບໍລິສັດໄດ້ໂຈະການຜະລິດ ເນື່ອງຈາກບັນຫາດ້ານທໍລະນີສາດຂອງແຫຼ່ງແຮ່, ລາຄາແຮ່ຕົກຕໍ່າ ແລະ ປັບປຸງລະບົບເຕັກໂນໂລຊີຂອງໂຮງງານປຸງແຕ່ງຄືນໃໝ່ ໃຫ້ໄດ້ຮັບປະສິດທິຜົນຕໍ່ການຜະລິດເພີ່ມຂຶ້ນ ຈຳນວນ 200,000 ໂຕນ/ປີ. ພ້ອມນັ້ນ ມາຮອດປີ 2020 ກໍຍັງພົບບັນຫາການແຜ່ລະບາດຂອງພະຍາດໂຄວິດ 19 ເຮັດໃຫ້ບໍ່ສາມາດນຳເຂົ້າອຸປະກອນເຄື່ອງຈັກ ເພື່ອມາປັບປຸງໂຮງງານ ໃຫ້ໄດ້ຕາມມາດຕະຖານເຕັກນິກ. ເຊິ່ງຜ່ານການກວດກາການຈັດຕັ້ງປະຕິບັດວຽກງານໃນປີ 2023 ເຫັນວ່າ ມາຮອດປະຈຸບັນ ບໍລິສັດຍັງບໍ່ມີການເຄື່ອນໄຫວພາກສະໜາມ ແລະ ຍັງບໍ່ທັນໄດ້ສືບຕໍ່ດຳເນີນການຂຸດຄົ້ນ, ປຸງແຕ່ງ ແລະ ຈຳໜ່າຍເທື່ອ. ນອກນັ້ນ, ບໍລິສັດຍັງພົບຄວາມຫຍຸ້ງຍາກໃນການແກ້ໄຂບັນຫາປະຊາຊົນເຂົ້າໄປດຳເນີນການບຸກເບີກກໍ່ສ້າງທີ່ຢູ່ອາໃສ ຢູ່ໃນເຂດສຳປະທານຂອງບໍລິສັດ ແລ້ວຮຽກຮ້ອງຄ່າຊົດເຊີຍສູງ ແລະ ບໍລິສັດ ລາຍງານວ່າອາດຈະບໍ່ສືບຕໍ່ດຳເນີນການຂຸດຄົ້ນຢູ່ເຂດດັ່ງກ່າວ ເນື່ອງຈາກບໍ່ເປັນເສດຖະກິດ ຍ້ອນມີການຊົດເຊີຍເນື້ອທີ່ລາຄາສູງ ແລະ ບໍ່ສາມາດເພີ້ມກຳລັງການຜະລິດຂຶ້ນໄດ້.

ເມື່ອເກີດມີສະພາບການຄືດັ່ງກ່າວ ບໍລິສັດຈຶ່ງໄດ້ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານ ຊ່ວຍຄົ້ນຄວ້າ ແລະພິຈາລະນາ ອະນຸຍາດໃຫ້ບໍລິສັດ ໄດ້ດຳເນີນການຂຸດຄົ້ນ ແລະ ປຸງແຕ່ງເກືອໂປຕາສ ຢູ່ເຂດບ້ານໄຮ່, ເມືອງປາກງື່ມ, ນະຄອນຫຼວງວຽງຈັນ ແລະ ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງລັດ ຊ່ວຍແກ້ໄຂບັນຫາປະຊາຊົນເຂົ້າໄປດຳເນີນການບຸກເບີກກໍ່ສ້າງທີ່ຢູ່ອາໃສ ຢູ່ໃນເຂດສຳປະທານຂອງບໍລິສັດ ແລ້ວຮຽກຮ້ອງຄ່າຊົດເຊີຍສູງ.

ນອກນັ້ນ, ໄລຍະຜ່ານມາ ບໍລິສັດ ໄດ້ນຳທຶນ ຈຳນວນ 200 ລ້ານໂດລາສະຫະລັດ ເພື່ອມາພັດທະນາໂຄງການ ແຕ່ລັດຖະບານໄດ້ໃຫ້ບໍລິສັດອວາຍເງິນດັ່ງກ່າວໄປໃຊ້ໃນກິດຈະການເຂື່ອນໄຟຟ້ານໍ້າອູກ່ອນ ຈຶ່ງເຮັດໃຫ້ບໍລິສັດສະລໍການພັດທະນາໂຄງການ.

ສັງລວມແລ້ວ, ນັບແຕ່ປີ 2010-2015 ບໍລິສັດ ສາມາດດຳເນີນການຂຸດຄົ້ນ, ປຸງແຕ່ງ ແລະ ຈຳໜ່າຍແຮ່ ໄດ້ຈຳນວນ 51,982 ໂຕນ, ລາຄາ 15,267,197 ໂດລາສະຫະລັດ, ຊຶ່ງເຫັນວ່າບໍ່ສາມາດປະຕິບັດໄດ້ຕາມສັນຍາ ແລະ ຕາມແຜນການທີ່ບໍລິສັດຈະດຳເນີນການຜະລິດຈຳນວນ 120,000 ໂຕນ/ປີ. ແຕ່ບໍລິສັດ ໄດ້ປະຕິບັດພັນທະທາງດ້ານການເງິນໃຫ້ລັດ ຄົບຖ້ວນຕາມສັນຍາ ຊຶ່ງສະແດງອອກ: ຊຳລະຄ່າສຳປະທານ ນັບແຕ່ປີ 2010 ຫາ 31 ທັນວາ 2024 ຈຳນວນ 1,103,287.33 ໂດລາສະຫະລັດ ແລະ ຊຳລະພັນທະ 5 ກອງທຶນ ນັບແຕ່ປີ 2010 ຫາ 31 ທັນວາ 2024 ຈຳນວນ 800,575.32 ໂດລາສະຫະລັດ.

3) **ການຄົ້ນຄວ້າ ຂອງ ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ**

(1) ໂຄງການຂຸດຄົ້ນ ແລະ ປຸງແຕ່ງເກືອກາລີ ( ໂປຕັສ ) ບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈຳກັດ ກວມເອົາ ເຂດ ບ້ານວຽງແກ້ວ, ຫ້ວຍເຕີຍ, ຫ້ວຍແດນເມືອງ ແລະ ດອນໝູນ ເມືອງໄຊທານີ ຕາມສັນຍາ ວ່າດ້ວຍການຂຸດຄົ້ນ ແລະ ປຸງແຕ່ງ ເກືອກາລີ (ໂປຕາສ) ສະບັບລົງວັນທີ 28 ທັນວາ 2009, ພາຍຫຼັງເຊັນສັນຍາສຳ ບໍລິສັດບໍ່ໄດ້ກຳນົດແຜນຜັງລວມຂອງໂຄງການ ແລະ ຍັງບໍ່ໄດ້ດຳເນີນການຊົດເຊີຍປະຊາຊົນ ຈຶ່ງເຮັດໃຫ້ ປະຊາຊົນເຂົ້າໄປອາໃສຢູ່ ກາຍເປັນຊຸມຊົນທີ່ໜ້າແໜ້ນ ແລະ ບໍ່ມີເນື້ອທີ່ໆ ຈະໃຫ້ ບໍລິສັດຂຸດຂົ້ນແລ້ວ;

(2) ສຳລັບການຈັດຕັ້ງປະຕິບັດໂຄງການຂຸດຄົ້ນ ແລະ ປຸງແຕ່ງເກືອກາລີ ( ໂປຕັສ ) ບໍລິສັດໄດ້ຢຸດຕິ ການຂຸດຄົ້ນ ແລະ ປຸງແຕ່ງ ມາແຕ່ປີ 2014 ເນື້ອງຈາກເຕັກນິກການຂຸດຄົ້ນບໍ່ສູງ, ແຕ່ໄດ້ຈັດຕັ້ງປະຕິບັດພັນທະທາງດ້ານການເງິນປົກກະຕິ ເປັນຕົ້ນ: ຊຳລະຄ່າສຳປະທານ ນັບແຕ່ປີ 2010 ຫາ 31 ທັນວາ 2024 ຈຳນວນ 1,103,287.33 ໂດລາສະຫະລັດ ແລະ ຊຳລະພັນທະ 5 ກອງທຶນ ນັບແຕ່ປີ 2010 ຫາ 31 ທັນວາ 2024 ຈຳນວນ 800,575.32 ໂດລາສະຫະລັດ;

(3) ສຳລັບດ້ານນິຕິກຳຂອງການໂອນຮຸ້ນ ອີງໃສກົດໝາຍວ່າດ້ວຍແຮ່ທາດ ປີ 2009 ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໃນປີ 2009 ແມ່ນບໍໄດ້ກຳນົດແຈ້ງກ່ຽວກັບການໂອນຮຸ້ນ. ແຕ່ອີງໃສສັນຍາ ວ່າດ້ວຍການຂຸດຄົ້ນ ແລະ ປຸງແຕ່ງ ເກືອກາລີ (ໂປຕາສ) ຢູ່ເຂດບ້ານທ່າງ່ອນ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ, ສປປ ລາວ ສະບັບລົງວັນທີ 28 ທັນວາ 2009 ມາດຕາ 4 ວິທີການດຳເນີນງານ ຂໍ້ 7 ບໍລິສັດ ແລະ ບັນດາຂາຫຸ້ນຂອງ ບໍລິສັດ ຕົກລົງວ່າພວກຕົນຈະບໍ່ກະທຳດັ່ງຕໍ່ໄປນີ້ຖ້າບໍ່ມີຄຳເຫັນດີລ່ວງຫນ້າຂອງລັດຖະບານ. ດັ່ງນັ້ນ, ຕໍ່ກັບການສະເໜີຂໍໂອນຫຸ້ນແມ່ນມີຄວາມເປັນໄປໄດ້ແຕ່ວ່າສຳລັບພື້ນທີ່ຂອງ

ນະຄອນຫຼວງວຽງຈັນ ເນື່ອງຈາກບໍລິສັດ ໄດ້ຢຸດການເຄື່ອນໄຫວດຳເນີນກິດຈະການມາດົນ ( ແຕ່ປີ 2014) ຈຶ່ງເຮັດໃຫ້ຂອບເຂດພື້ນທີ່ທີ່ບໍລິສັດເຄີຍສຳປະທານ ມາຮອດປັດຈຸບັນໄດ້ຂະຫຍາຍໂຕເປັນຊຸມຊົນໃຫຍ່ແລ້ວ ອາດຈະບໍ່ມີພື້ນທີ່ໃຫ້ ບໍລິສັດສາມາດຂຸດຄົ້ນໄດ້. ສ່ວນຂັ້ນຕອນການສະເໜີຂໍໂອນຮຸ້ນ ຂອງໂຄງການຂຸດຄົ້ນ ແລະ ປຸງແຕ່ງເກືອກາລີ ( ໂປຕັສ ) ບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈຳກັດ ສະເໜີໃຫ້ລັດຖະບານເປັນຜູ້ພິຈາລະນາຕາມກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາຮອດນີ້, ການລາຍງານຂອງຂ້າພະເຈົ້າ** ກ່ຽວກັບການສະເໜີຂໍໂອນຮຸ້ນ ໃນໂຄງການຂຸດຄົ້ນ ແລະ ປຸງແຕ່ງ ເກືອກາລີ (ໂປຕາສ) ຢູ່ເຂດບ້ານທ່າງ່ອນ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ຂອງບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈຳກັດ ມາຮອດນີ້ ກໍໄດ້ສິ້ນສຸດລົງແລ້ວ, ສະເໜີຂໍທິດຊີ້ນຳຕາມເຫັນສົມຄວນດ້ວຍ. ຂໍຂອບໃຈ,